ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0260 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 9 ມີນາ 2022

# ແຈ້ງການ

ເຖິງ: ສະມາຄົມນໍ້າມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນໍ້າມັນເຊື້ອໄຟ ແລະ ປໍ້າຂາຍຍ່ອຍນໍ້າມັນເຊື້ອໄຟ.

ເລື່ອງ: ແຈ້ງປັບຂຶ້ນລາຄາຂາຍຍ່ອຍນໍ້າມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍ ກ່ຽວກັບ ສ່ວຍສາອາກອນ ເລກທີ 01/ສພຊ, ລົງວັນທີ 07 ສິງຫາ 2021.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 158/ຫສນຍ, ລົງວັນທີ 17 ກຸມພາ 2021.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 886/ຫສນຍ, ລົງວັນທີ 28 ກໍລະກົດ 2021.

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງສະມາຄົມນໍ້າມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນໍ້າມັນເຊື້ອໄຟ ແລະ ປໍ້າຂາຍຍ່ອຍນໍ້າມັນເຊື້ອໄຟ ໃຫ້ປະຕິບັດລາຄາຂາຍຍ່ອຍໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ດັ່ງນີ້:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 18,640 | 16,380 | 14,510 |
| 2 | ແຂວງຜົ້ງສາລີ | 19,280 | 17,020 | 15,150 |
| 3 | ແຂວງຫຼວງນໍ້າທາ | 19,000 | 16,740 | 14,870 |
| 4 | ແຂວງອຸດົມໄຊ | 19,120 | 16,860 | 14,990 |
| 5 | ແຂວງບໍ່ແກ້ວ | 18,740 | 16,480 | 14,610 |
| 6 | ແຂວງຫຼວງພະບາງ | 19,010 | 16,750 | 14,880 |
| 7 | ແຂວງໄຊຍະບູລີ | 18,890 | 16,630 | 14,760 |
| 8 | ແຂວງຫົວພັນ | 19,040 | 16,780 | 14,910 |
| 9 | ແຂວງຊຽງຂວາງ | 18,830 | 16,570 | 14,700 |
| 10 | ແຂວງວຽງຈັນ | 18,640 | 16,380 | 14,510 |
| 11 | ແຂວງບໍລິຄຳໄຊ | 18,720 | 16,460 | 14,590 |
| 12 | ແຂວງຄຳມ່ວນ | 18,670 | 16,410 | 14,540 |
| 13 | ແຂວງສະຫວັນນະເຂດ | 18,670 | 16,410 | 14,540 |
| 14 | ແຂວງສາລະວັນ | 18,850 | 16,590 | 14,710 |
| 15 | ແຂວງຈຳປາສັກ | 18,700 | 16,440 | 14,570 |
| 16 | ແຂວງເຊກອງ | 18,850 | 16,590 | 14,710 |
| 17 | ແຂວງອັດຕະປື | 18,880 | 16,620 | 14,750 |
| 18 | ແຂວງໄຊສົມບູນ | 18,920 | 16,660 | 14,790 |

- ລາຄາໃໝ່ນີ້ ໃຫ້ເລີ່ມປະຕິບັດ ວັນທີ 10 ມີນາ 2022; ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
- ການປັບລາຄານ້ຳມັນເຊື້ອໄຟ ຄັ້ງນີ້ ແມ່ນໄດ້ປັບຂຶ້ນລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ທຸກຊະນິດ ຄື: ນ້ຳມັນແອັດຊັງພິເສດ ປັບຂຶ້ນ 1.710 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ ປັບຂຶ້ນ 1.430 ກີບ/ລິດ ແລະ ນ້ຳມັນກາຊວນ ປັບຂຶ້ນ 1.570 ກີບ/ລິດ.
- ການຄິດໄລ່ເສຍພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0173 /ກຄພນ, ລົງວັນທີ 08 ມີນາ 2022 ຈົນກວ່າຈະມີການປ່ຽນແປງ.
- ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 0217/ອຄ, ລົງວັນທີ 24 ກຸມພາ 2022.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ລັດຖະມົນຕີ

ລັດຖະມົນຕີ

ປອ.ຄຳແພງ ໄຊສົມແພງ

ບ່ອນສົ່ງ

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).